ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້
ກົມຈັດຕັ້ງ ແລະ ພະນັກງານ

ເລກທີ 0209 /ກຈພ
ນະຄອນຫຼວງວຽງຈັນ, ວັນທີ 05.02.2025

# ແຈ້ງການ

ເຖິງ : - ຫ້ອງການກະຊວງ, ບັນດາກົມ, ສະຖາບັນ ແລະ ສູນ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້.
- ບັນດາວິທະຍາໄລກະສິກຳ ແລະ ປ່າໄມ້ ທີ່ ຂຶ້ນກັບກະຊວງກະສິກຳ ແລະ ປ່າໄມ້.
- ບັນດາພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງວຽງຈັນ.

ເລື່ອງ: **ສະໝັກທຶນການສຶກສາ ລະດັບວິຊາຊີບຊັ້ນສູງ, ລະດັບປະລິນຍາໂທ ແລະ ປະລິນຍາເອກ ຂອງລັດຖະບານອົດສະຕຣາລີ (Australia Awards Scholarships) ສຳລັບສົກປີ 2026.**

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 1617/ກປ, ລົງວັນທີ 29 ທັນວາ 2021;
- ອີງຕາມ ໜັງສືແຈ້ງທຶນການສຶກສາຂອງສະຖາບັນລາວ-ອົດສະຕຣາລີ ສະບັບລົງວັນທີ 08 ມັງກອນ 2024;
- ອີງຕາມ ໜັງສືແຈ້ງທຶນການສຶກສາ ຈາກຫ້ອງການ, ກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 468/ຫກ, ລົງວັນທີ 02 ກຸມພາ 2024;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີຂອງພະແນກຄຸ້ມຄອງ ແລະ ພັດທະນາຊັບພະຍາກອນມະນຸດ.

ກົມຈັດຕັ້ງ ແລະ ພະນັກງານຂໍຖືເປັນກຽດ ແຈ້ງມາຍັງທ່ານ ເພື່ອຄັດເລືອກເອົາພະນັກງານຜູ້ທີ່ມີເງື່ອນໄຂເຂົ້າຮ່ວມສະໝັກທຶນການສຶກສາ ລະດັບວິຊາຊີບຊັ້ນສູງ, ລະດັບປະລິນຍາໂທ ແລະ ປະລິນຍາເອກ ຂອງລັດຖະບານອົດສະຕຣາລີ (Australia Awards Scholarships) ສຳລັບສົກປີ 2026.

<u>ເງື່ອນໄຂ ແລະ ວິທີການສະໝັກ:</u>

❖ ລະດັບຊັ້ນວິຊາຊີບຊັ້ນສູງ

- ຜູ້ສະໝັກຕ້ອງໄດ້ຈົບການສຶກສາໃນລະດັບມັດທະຍົມຕອນປາຍ ຫຼື ຈະຈົບມັດທະຍົມຕອນປາຍ ກ່ອນວັນທີ 30 ກັນຍາ 2024;
- ສຳລັບຜູ້ທີ່ ຈົບການສຶກສາລະດັບ ອະນຸປະລິນຍາ ຫຼື ລະດັບປະລິນຍາຕີ ແມ່ນຕ້ອງມີປະສົບການໃນການເຮັດວຽກຢ່າງໜ້ອຍ 02 ປີ.

❖ <u>ລະດັບປະລິຍາໂທ</u>

- ຜູ້ທີ່ຈະສະໝັກຕ້ອງເປັນຄົນສັນຊາດລາວ ອາຍຸບໍ່ເກີນ 50 ປີ;
- ຜູ້ສະໝັກໃນລະດັບປະລິນຍາໂທ ຕ້ອງມີປະສົບການໃນການເຮັດວຽກທີ່ກ່ຽວຂ້ອງ ຢ່າງໜ້ອຍ 02 ປີ.
- ຜູ້ທີ່ຈະສະໝັກຕ້ອງຈົບການສຶກສາໃນລະດັບ ປະລິນຍາຕີ ຂຶ້ນໄປ ທັງພາຍໃນ ແລະ ຕ່າງປະເທດ(ໃບປະກາດ ແລະ ໃບຄະແນນແມ່ນໃຫ້ແປເປັນພາສາອັງກິດສຳລັບຜູ້ສະໝັກທີ່ຈົບພາຍໃນ)
- ຜູ້ສະໝັກຕ້ອງມີຄວາມຮູ້ດ້ານພາສາອັງກິດໃນລະດັບດີ, ຖ້າມີຄະແນນ IELTS ຈະເປັນການດີ;
- ຜູ້ສະໝັກທີ່ໄດ້ຈົບການສຶກສາລະດັບປະລິນຍາໂທແລ້ວກໍ່ສາມາດສະໝັກໄດ້ ແຕ່ຈະໄດ້ຮັບບຸລິມະສິດຕາມຫລັງຜູ້ທີ່ຍັງບໍ່ທັນໄດ້ຮັບທຶນປະລິນຍາໂທມາກ່ອນ;



ກົມຈັດຕັ້ງ ແລະ ພະນັກງານ, ຕູ້ປນ 811, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ/ແຟັກ: 021 412347, 415368, 452455, E-mail: doapmaf@gmail.com

❖ <u>ລະດັບປະລິນຍາເອກ</u>

- ຜູ້ທີ່ຈະສະໝັກຕ້ອງຈົບການສຶກສາໃນລະດັບ ປະລິນຍາໂທ ຂຶ້ນໄປ (ໃບປະກາດ ແລະ ໃບຄະແນນແມ່ນໃຫ້ແປເປັນພາສາອັງກິດສຳລັບຜູ້ສະໝັກທີ່ຈົບພາຍໃນ);
- ຜູ້ທີ່ຈະສະໝັກຕ້ອງເປັນຄົນສັນຊາດລາວ ອາຍຸບໍ່ເກີນ 50 ປີ;
- ຜູ້ສະໝັກຕ້ອງມີຄວາມຮູ້ດ້ານພາສາອັງກິດໃນລະດັບດີ ທັງພາສາເວົ້າ ແລະ ຂຽນ ໂດຍມີຄະແນນ IELTS ຢ່າງໜ້ອຍແມ່ນ 6.5;
- ຜູ້ສະໝັກໃນລະດັບປະລິນຍາເອກ ຕ້ອງມີປະສົບການໃນການເຮັດວຽກທີ່ກ່ຽວຂ້ອງກັບລະດັບປະລິນຍາເອກທີ່ຕົນເອງສະໝັກຢ່າງໜ້ອຍ 03 ປີ.

ສຳລັບລາຍລະອຽດ, ເງື່ອນໄຂ ແລະ ຮູບແບບການສະໝັກແມ່ນໃຫ້ສະໝັກຜ່ານລະບົບອອນລາຍໂດຍຜ່ານທາງເວັບໄຊ www.australiaawardslaos.org ໄລຍະການສະໝັກທຶນແມ່ນ **01 ກຸມພາ 2025 ເຖິງ 30 ເມສາ 2025**, ສ່ວນລາຍລະອຽດເພີ່ມເຕີມ ແມ່ນໃຫ້ພົວພັນ ກົມຈັດຕັ້ງ ແລະ ພະນັກງານ ທ. ສົມເພັດອຸດອນ ດວງມາລາ ໂທ: 021 415368, 020 52879569.

**ໝາຍເຫດ:** ສະຖາບັນລາວ-ອົດສະຕຣາລີ (LAI) ຈະໄດ້ເຜີຍແຜ່ຂໍ້ມູນໃຫ້ພະນັກງານລັດຖະກອນ ກ່ຽວກັບເງື່ອນໄຂ ແລະ ຂັ້ນຕອນການສະໝັກທຶນການສຶກສາ ຂອງລັດຖະບານອົດສະຕຣາລີ ສຳລັບສົກປີ 2026, ໃນວັນທີ **07 ກຸມພາ 2025, ເວລາ 13: 30 – 16: 00 ໂມງ,** ທີ່ ຫ້ອງປະຊຸມ ຫຼວງພະບາງ ຂອງໂຮງແຮງເມືອງແທ່ງ, ນະຄອນຫຼວງວຽງຈັນ ແລະ ສາມາດລົງທະບຽນອອນລາຍ ເພື່ອເຂົ້າຮ່ວມໄດ້ ທີ່ https://bit.ly/Info 2026-Government.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ພິຈາລະນາຕາມທາງຄວນດ້ວຍ.

**ຫົວໜ້າກົມ**

**ນ.ອຸລາພອນ ພົງສະຫວັດ**



ກົມຈັດຕັ້ງ ແລະ ພະນັກງານ, ຕູ້ປນ 811, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ/ແຟັກ: 021 412347, 415368, 452455, E-mail: doapmaf@gmail.com

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສຶກສາທິການ ແລະ ກິລາ
ຫ້ອງການ

ເລກທີ 352 /ຫກ
ນະຄອນຫຼວງວຽງຈັນ, ວັນທີ 30 ມັງກອນ 2025

## ແຈ້ງທຶນການສຶກສາ

**ຮຽນ:** - ທ່ານ ຫົວໜ້າຫ້ອງການ ກະຊວງ ແລະ ອົງການທຽບເທົ່າ.
- ທ່ານ ອະທິການບໍດີມະຫາວິທະຍາໄລ 5 ແຫ່ງ.
- ທ່ານ ຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ.
- ທ່ານ ຜູ້ອຳນວຍການສະຖາບັນ ແລະ ວິທະຍາໄລທັງພາກລັດ ແລະ ເອກະຊົນ.
- ບັນດາພະນັກງານ-ນັກສຶກສາ ທັງພາກລັດ-ເອກະຊົນ.

**ເລື່ອງ:** ແຈ້ງທຶນການສຶກສາລັດຖະບານອົດສະຕຣາລີ (AAS) ສຳລັບປີ 2026.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງສຶກສາທິການ ແລະ ກິລາ, ສະບັບເລກທີ 4883/ສສກ, ລົງວັນທີ 23 ກັນຍາ 2022;
- ອີງຕາມ ໜັງສືສົ່ງຈາກ ຫ້ອງການສະຖາບັນລາວ - ອົດສະຕຣາລີ, (Laos Australia Institute/LAI) ສະບັບລົງວັນທີ 19 ທັນວາ 2024.
- ອີງຕາມ ຂໍ້ຕົກລົງຂອງທ່ານຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ, ສະບັບເລກທີ 168/ສສກ, ລົງວັນທີ 15 ມັງກອນ 2025.

ຫ້ອງການກະຊວງສຶກສາທິການ ແລະ ກິລາ ຂໍແຈ້ງທຶນການສຶກສາລັດຖະບານອົດສະຕຣາລີ Australia Awards Scholarship (AAS), ຊຶ່ງສະຖາບັນລາວ-ອົດສະຕຣາລີ ເປັນຜູ້ບໍລິຫານໂຄງການທຶນການສຶກສາຂອງລັດຖະບານອົດສະຕຣາລີ (Laos Australia Institute/LAI) ປະຈຳ ສປປ ລາວ ເປັນທຶນການສຶກສາເປີດກວ້າງໃຫ້ທັງພາກລັດ-ເອກະຊົນ ທີ່ປະກອບມີລະດັບ ວິຊາຊີບຊັ້ນສູງ, ປະລິນຍາໂທ ແລະ ປະລິນຍາເອກ.

ໄລຍະສະໝັກທຶນການສຶກສາແມ່ນ ໃນວັນທີ 01 ກຸມພາ 2025 ເຖິງ 30 ເມສາ 2025 ທາງອອນລາຍ. ສ່ວນລາຍລະອຽດຂອງວິທີສະໝັກ ແລະ ເງື່ອນໄຂຂອງຜູ້ສະໝັກ ແມ່ນລະບຸໄວ້ໃນເວັບໄຊ: www.australiaawardslaos.org.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ດຳເນີການຕາມທາງຄວນດ້ວຍ.

**ຫົວໜ້າຫ້ອງການ**

ກະຊວງສຶກສາທິການ ... ຫ້ອງການ

ພົນມະແສງ ທິບພະວົງ

ພະແນກຄຸ້ມຄອງທຶນການສຶກສາ ແລະ ນັກສຶກສາ., ກົມກິດຈະການນັກສຶກສາ, ກະຊວງສຶກສາທິການ ແລະ ກິລາ(ເຂດກິລາເຈົ້າອານຸວົງ)
ເບີໂທ 021 255033, 255035. ອີເມວ: dsa.moes@yahco.com